# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 08 ມິຖຸນາ 2008 ( 06-08-2008 )

## <u>ກົດເກນສາມຂໍ້ສຳລັບການເຮັດວຽກທີ່ສລາດ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ສຸພາສິດ 6:1-15)

<u>ຄຳຖາມແຫ່ງຊີວິດ:</u> ຂ້າພະເຈົ້າຈະສາມາດມີຊີວິດການທຳງານທີ່ດີກວ່າເກົ່າໄດ້ຢ່າງໃດ?

<u>ຄວາມຈິງໃນພຣະຄັມພີ:</u> ສະຕິປັນຍາທີ່ພົບໃນພຣະຄັມພີໄດ້ສອນໄພ່ພົນຂອງພຣະເຈົ້າໃຫ້ລະມັດລະວັງຕໍ່ການເຂົ້າໃນພັນທະກິດທີ່ບໍ່ໄດ້ໄຕ່ຕອງຖ້ອນຖີ່, ແຕ່ໃຫ້ປະຕິບັດຢ່າງສລຽວສລາດ, ແລະໃຫ້ຫລີກເວັ້ນໃນການເຮັດບໍ່ດີຕໍ່ຄົນອື່ນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃນການໃຊ້ສຕິປັນຍາຈາກເບື້ອງເທິງໃນຊີວິດປະຈຳວັນຂອງທ່ານໂດຍ:

- ການສັງເກດເຫັນນິສັຍ ແລະການປະພຶດທີ່ສາມາດທຳລາຍຊີວິດການທຳງານຂອງທ່ານ, ແລະ
- ການຕັດສິນໃຈແນ້ວແນ່ທີ່ຈະຕິດຕາມນິສັຍທີ່ສລາດ ແລະການປະພຶດໃນຊີວິດການທຳງານຂອງທ່ານ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>" , ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ໃຫ້ຄິດກັບໄປຫາເດັກນ້ອຍໃນເຂດຄຸ້ມບ້ານຂອງທ່ານ ແລະຄຳຖາມທີ່ໃຫ້ເດັກນ້ອຍທຸກຄົນຕອບ,ຊຶ່ງເປັນຄຳຖາມທີ່ຫລີກລ້ຽງບໍ່ໄດ້ນັ້ນກໍຄື: ໃນເມື່ອເຈົ້າໃຫຍ່ຂຶ້ນມາແລ້ວ ເຈົ້າຢາກເຮັດຫຍັງ ຫລືຢາກເປັນຫຍັງ? ໃຫ້ນັກຮຽນອາສາສມັກແບ່ງປັນຄຳຕອບຂອງເຂົາ ແລ້ວມາພິຈາຣະນາເບິ່ງວ່າເດັກເຫລົ່ານັ້ນຕອບມາຢ່າງໃດ? ນຳພານັກຮຽນຫັນມາຫາຄຳຖາມແຫ່ງຊີວິດສຳລັບອາທິດນີ້ທີ່ວ່າ: ເຮັດແນວໃດໃນຊີວິດນີ້ຂ້າພະເຈົ້າຈຶ່ງຈະມີວຽກງານດີ ໆ? ພຣະເຈົ້າຊົງຢາກໃຫ້ຄົນຂອງພຣະອົງປະສົບຄວາມສຳເຣັດໃນຊີວິດ.

## 1. <u>ຕ້ອງລະມັດລະວັງຕໍ່ການພົວພັນກັບພັນທະກິດທີ່ບໍ່ໄດ້ຄິດໃຫ້ລະອຽດ:</u> ( ສຸພາສິດ 6:1-5

- ຂໍໃຫ້ນັກຮຽນອາສາສມັກອ່ານ (ສຸພາສິດ 6:1-5)
- ຖາມວ່າ: ແມ່ນຫຍັງທີ່ກະສັດໂຊໂລໂມນໄດ້ໃຫ້ຄຳປຶກສາແກ່ຄົນເຫລົ່ານີ້?
- ຈູງໃຈໃຫ້ຜູ້ທີ່ກຳລັງຕົກຂຸມ ຫລືກັບດັກໃຫ້ພົ້ນຕາມທີ່ກະສັດໂຊໂລໂມນແນະນຳຄົນຂອງພຣະເຈົ້າໃຫ້ພົ້ນຈາກການຕິດພັນຢູ່ກັບສິ່ງຂອງທາງຝ່າຍໂລກ ແລະການພົບກັບຄວາມພໍພຽງໃນຊີວິດ.
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອອກມາທາງໜ້າ ແລ້ວໃຫ້ລອງແກ້ເຊືອກທີ່ຫຍຸ້ງໃຫ້ໄດ້. ຫລັງຈາກນັ້ນໃຫ້ມີຜູ້ອາສາສມັກເລົ່າເຣື່ອງຄວາມຮູ້ສຶກຕໍ່ການທົດລອງຕ່າງໆ ທີ່ແກ້ໄຂຍາກເໝືອນດັ່ງແກ້ເຊືອກທີ່ຫຍຸ້ງບໍ່ເປັນລະບຽບໃຫ້ດີນັ້ນ.
- ໃຫ້ຍົກເອົາຕົວຢ່າງງຂອງຄົນໂງ່ທີ່ຕົກຢູ່ໃນຄວາມທຸກຈົນ. ບາງທີທ່ານອາດຈະຣາຍໄລ້ທ໌ ( ໝາຍດ້ວຍສີ) ໃນຄຳວ່າ "**ຮັ່ງມີ**" ເປັນຄຳອຸບາຍຊຶ່ງເຂົ້າໂຄສະນາອອກທີວີ ຫລືທາງ ອິແມລ.
- ນຳພານັກຮຽນຂຽນລາຍການອະທິຖານ ການຊອກສແວງຫາສະຕິປັນຍາຂອງພຣະເຈົ້າເພື່ອຫລີກເວັ້ນຈາກການຕິດກັບດັກຂອງຄວາມໂງ່.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> (ສຸພາສິດ 6:1-5)

1. ໃນຂໍ້ພຣະຄຳຕອນນີ້ໄດ້ໃຫ້ຄຳປຶກສາເຣື່ອງການປົດປ່ອຍອອກຈາກກັບດັກຂອງຄວາມໂງ່ ແລະຈາກການສ່ຽງຕໍ່ການທຳສັນຍາຕໍ່ກົດໝາຍໄດ້ຢ່າງໃດ?
2. ກັບດັກຄວາມໂງ່ດ້ານການເງິນອັນໃດແດ່ທີ່ທ່ານຕ້ອງການຫລີກເວັ້ນ? ຂັ້ນຕອນໃດແດ່ທີ່ທ່ານຈະຕ້ອງຮັບເອົາ ແລະທຳຕາມ?
3. ແມ່ນຫຍັງທີ່ຂັດຂວາງຄວາມຫວັງແລະຄວາມພຍາຍາມທີ່ຈະເອົາຕົວຫລຸດພົ້ນຈາກການຝຶດເຄືອງທາງການເງິນຂອງທ່ານ? ທ່ານຈະຕຽມການແກ້ໄຂປຸປສັກດັ່ງກ່າວນີ້ຢ່າງໃດ?

## 2. <u>ສລາດໃນການເຮັດວຽກງານຂອງທ່ານ:</u> (ສຸພາສິດ 6:6-11)

- ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມສຸພາສິດ 6:6-11
- ສັ່ງຊາເບິ່ງຜົນດີໃນການທຳງານຂອງມົດທີ່ພຣະຄຳເຫລົ່ານີ້ໄດ້ເອົາມາປຽບທຽບໃຫ້ບັນດາຜູ້ທີ່ເຊື່ອທັງຫລາຍເບິ່ງເອົາເປັນຕົວຢ່າງ.
- ທ້າທາຍນັກຮຽນໃຫ້ຊອກຫາຄຳຕອບຂອງຜູ້ທີ່ກຽດຄ້ານທີ່ຢູ່ໃນພຣະຄຳເຫລົ່ານີ້ວ່າເປັນຢ່າງໃດ.
- ນຳພານັກຮຽນໃຫ້ສົນທະນາເຣື່ອງຂອງທຳງານ, ບາງເທື່ອອາດຈະເປັນການທົດລອງເຮັດໃຫ້ເມື່ອນໜ່າຍບໍ່ຢາກເຮັດບໍ່ຢາກທຳ. ບາງທີຄຣິສຕຽນຂອງພວກເຮົາອາດຈະທຳງານໄປໂດຍບໍ່ປາກບໍ່ເວົ້າກໍອາດຈະເປັນພຍານຢ່າງນຶ່ງກໍເປັນໄດ້. ໝູນໃຈໃຫ້ວ່າເຮັດແນວໃດພວກເຮົາຜູ້ທີ່ເຊື່ອຈະຮ່ວມກັນແບ່ງປັນໃນດ້ານການທຳງານທີ່ຂຍັນເພື່ອເປັນແບບຢ່າງໃຫ້ກັບຄົນອື່ນໄດ້.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> (ສຸພາສິດ 6:6-11)

1. ດ້ວຍເຫດໃດມົດຈຶ່ງມີບົດບາດເປັນແບບຢ່າງໃນການທຳງານທີ່ສລາດຫລັກແຫລມ?

2. ຜົນໄດ້ຮັບຂອງຜູ້ໃດຜູ້ນຶ່ງທີ່ມີການລໍຄອຍດ້ວຍຄວາມກຽດຄ້ານນັ້ນເປັນແນວໃດ?
3. ໃນຣະຫວ່າງໃດໃນຊີວິດຂອງທ່ານທີ່ໄດ້ຖືກລໍ້ລວງໃຫ້ມີຄວາມກຽດຄ້ານ ແລະທ່ານໄດ້ເຮັດຫຍັງແດ່ເພື່ອຈະໄດ້ຫລີກລ້ຽງຈາກການຫລອກລວງປະເພດນັ້ນ?

## 3. ຕັກເຕືອນກ່ຽວກັບການເຮັດທີ່ບໍ່ເປັນທັມ: (ສຸພາສິດ 6:12-15)

- ຂໍໃຫ້ອາສາສມັກອ່ານພຣະທັມ ສຸພາສິດ 6:12-15
- ໃຫ້ນັກຮຽນເວົ້າເຣື່ອງຄວາມຊົ່ວຮ້າຍຂອງຜູ້ທີ່ສ້າງບັນຫາທີ່ເຂົາເຈົ້າເຄີຍເຫັນມາ, ທີ່ເປັນຄວາມຈິງຫລືຈາກພາພຍົນ (ຊຶ່ງເປັນການຫລອກລວງ, ສາຍວີດີໂອສັ້ນໆກໍໄດ້) ແລ້ວນໍາເອົາເຣື່ອງທີ່ເລົ່າມານັ້ນມາປຽບທຽບໃສ່ກັບຄົນຜູ້ທີ່ທໍາຊົ່ວທີ່ສຸດໃນສຸພາສິດ 6:12-14.
- ໃຫ້ນັກຮຽນອ່ານພຣະທັມຄາລາເຕັຽ 6:7 ທີ່ສະແດງເຖິງຈົດໝາຍຂອງໂປໂລທີ່ຂຽນໄປຫາຊາວຄາລາເຕັຽ, ທີ່ອ້າງອີງເຖິງຄໍາຢືນຢັນຄໍາເວົ້າຂອງກະສັດໂຊໂລໂມນມາຂຽນໄວ້ໃນສຸພາສິດ.
- ໃຫ້ນນັກຮຽນຄິດເບິ່ງການດໍາເນີນຊີວິດຂອງເຂົາເຈົ້ານັ້ນໄດ້ເປັນແວ່ນທີ່ສະທ້ອນໃຫ້ເຫັນການກະທໍາແນວບໍ່ດີໃນຊີວິດຂອງເຂົາເຈົ້າບໍ່. ນໍາພາເຂົາເຈົ້າອະທິຖານຂໍການຊີ້ນໍາ, ຂໍໃຫ້ພຣະເຈົ້າຊົງອະພັຍ ແລະກັບມາດໍາເນີນຊີວິດທີ່ເຮັດໃຫ້ບໍຣິສຸດ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 6:12-15)
1. ທ່ານຈະພັນລະນາເຣື່ອງຂອງຄົນໄຮ້ຄ່າໃນພຣະທັມສຸພາສິດ 6:12-14 ວ່າຢ່າງໃດ?
2. ຜົນສຸດທ້າຍໃນການດໍາເນີນຊີວິດຂອງຄົນຊົ່ວຮ້າຍນັ້ນເປັນແນວໃດ?
3. ໃນຊີວິດຂອງທ່ານມີສິ່ງໃດຊົ່ວຮ້າຍທີ່ຈະຕ້ອງຊໍາຣະລ້າງມັນອອກໄປຢູ່ບໍ່? ທ່ານພ້ອມທີ່ຈະອະທິຖານ, ອ້ອນວອນທູນຂໍໃຫ້ພຣະເຈົ້າອະພັຍຍົກໂທດໃຫ້ ແລະເພິ່ງພຣະຄຸນຂອງພຣະອົງ ແລະຈະດໍາເນີນຊີວິດຢ່າງບໍຣິສຸດສົດຊື່ນແລະເຂັ້ມແຂງໃນພຣະອົງແລ້ວບໍ່?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຈົ້າມີພຣະປະສົງໃຫ້ພວກເຮົາເກີດຜົນໃນການທໍາງານໃຫ້ສໍາເຣັດຢ່າງສົມບູນໃນການດໍາເນີນຊີວິດ.
- ພວກເຮົາຕ້ອງຣະມັດຣະວັງໃນການຜູກພັນກັບການງານທີ່ໂງ່ຈ້າ.
- ພວກເຮົາຄວນຈະເຂັ້ມແຂງໃນການທໍາງານ, ຫລີກເວັ້ນຈາກການຕົກເປັນທາດຂອງຄວາມກຽດຄ້ານຫລືກາຍເປັນຄົນບ້າທໍາງານ.
- ພວກເຮົາຕ້ອງໃຫ້ກຽດຍ້ອງຍໍຄົນທີ່ສັດຊື່ ແລະເບິ່ງເຂົາໃຫ້ອອກວ່າຜູ້ໃດທີ່ບໍ່ສັດຊື່ສຸຈຣິດຕໍ່ເຮົາ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )